ບົດລາຍງານ
ຜົນການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານຂອງ
ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ
ປະຈຳປີ 2024



ໂດຍ:

ຕະຫຼາດຫຼັກຊັບລາວ

ສາລະບານ

1. ຂໍ້ມູນກ່ຽວກັບບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ 1

1.1. ຂໍ້ມູນທົ່ວໄປ 1

1.2. ຂໍ້ມູນທາງການເງິນ 1

1.3. ຂໍ້ມູນສະພາບໍລິຫານ 1

1.4. ຂໍ້ມູນຄະນະກຳມະການຂອງສະພາບໍລິຫານ 1

1.5. ຂໍ້ມູນຄະນະອຳນວຍການ 2

1.6. ຂໍ້ມູນຜູ້ຮັບຜິດຊອບວຽກງານ CG 2

2. ພາບລວມຄະແນນຜົນການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ 2

2.1. ຜົນການປະເມີນຄະແນນຕົວຈິງ 2

2.2. ຜົນການປະເມີນແຍກຕາມໝວດການໃຫ້ຄະແນນ 3

3. ຂໍ້ປະຕິບັດສອດຄ່ອງ ແລະ ຂໍ້ຄົງຄ້າງ 4

3.1. ພາກທີ 1 ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ 4

3.2. ພາກທີ 2 ການຄຸ້ມຄອງສາຍພົວພັນກັບຜູ້ມີສ່ວນຮ່ວມໃນຕະຫຼາດ 4

3.3. ພາກທີ 3 ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ 5

3.4. ພາກທີ 4 ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ 7

4. ສິ່ງທີ່ຕ້ອງໄດ້ປັບປຸງ 8

4.1. ສິ່ງທີ່ຄວນກຳນົດໃນລະບຽບພາຍໃນ ຫຼື ລະບຽບການສະເພາະຂອງບໍລິສັດ 8

4.2. ສິ່ງທີ່ຄວນນຳໄປຈັດຕັ້ງປະຕິບັດໃນຕໍ່ໜ້າ 9

1. ຂໍ້ມູນກ່ຽວກັບ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

1.1. ຂໍ້ມູນທົ່ວໄປ

ຫົວຂໍ້	ລາຍລະອຽດ
ຊື່ບໍລິສັດ:	ບໍລິສັດພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ)
ທີ່ຕັ້ງສຳນັກງານໃຫຍ່:	ຊັ້ນ 3 ອາຄານໂຮງແຮມຄອນຕິເນັນໂທພລາຊາວຽງຈັນ ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ
ເບີໂທລະສັບ:	021 229696
ປະເພດທຸລະກິດ:	ບໍລິການວຽກງານວິສະວະກຳ ແລະ ກໍ່ສ້າງຄົບວົງຈອນ
ວັນ.ເດືອນ.ປີ ຈົດທະບຽນໃນ ຕລຊລ:	10 ຕຸລາ 2017
ເວັບໄຊ:	
ຈຳນວນພະນັກງານ:	155 ຄົນ
ຈຳນວນຮຸ້ນຈົດທະບຽນ:	582,000,000 ຮຸ້ນ
ລາຄາຕະຫຼາດ (20/12/2023):	1,080 ກີບ/ຮຸ້ນ
ມູນຄ່າຕະຫຼາດ (20/12/2023):	931,200,000,000 ກີບ

1.2. ຂໍ້ມູນທາງການເງິນ

ຕົວເລກທາງການເງິນ (31 ທັນວາ 2023)	
ຊັບສິນ: 992,801 ລ້ານກີບ	ລາຍຮັບ: 162,897 ລ້ານກີບ
ໜີ້ສິນ: 367,580 ລ້ານກີບ	ລາຍຈ່າຍ: 20,659 ລ້ານກີບ
ທຶນ: 992,801 ລ້ານກີບ	ກຳໄລສຸດທິ: 142,238 ລ້ານກີບ

1.3. ຂໍ້ມູນສະພາບໍລິຫານ

ສະພາບໍລິຫານ ຂອງ ບໍລິສັດ ພກພ ປະກອບມີສະມາຊິກສະພາບໍລິຫານທັງໝົດ 7 ທ່ານ ຊຶ່ງມີລາຍຊື່ ດັ່ງນີ້:

ລ.ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ປອ ສີທອງ ພິມມະຈິດ	ປະທານສະພາບໍລິຫານ
2	ທ່ານ ສີທາ ພິມມະຈິດ	ຮອງປະທານສະພາບໍລິຫານ
3	ທ່ານ ນັນທະລັດ ທິລະກຸນ	ສະມາຊິກອິດສະຫຼະ
4	ທ່ານ ແພງ ດວງເງິນ	ສະມາຊິກ
5	ທ່ານ ນາງ ໄຮທອງ ພິມມະຈິດ	ສະມາຊິກ
6	ທ່ານ ພຸດທະເສນ ພິມມີໄຊ	ສະມາຊິກອິດສະຫຼະ
7	ທ່ານ ພູມສະຫວັນ ສຸນັນທອງ	ສະມາຊິກ

1.4. ຂໍ້ມູນຄະນະກຳມະການຂອງສະພາບໍລິຫານ

ຄະນະກຳມະການຂອງສະພາບໍລິຫານ ບໍລິສັດ ພກພ ປະກອບມີ 3 ຄະນະກຳມະການ ເຊິ່ງແຕ່ລະຄະນະກຳມະການ ປະກອບດ້ວຍສະມາຊິກ ດັ່ງນີ້:

1) ຄະນະກຳມະການກວດສອບ

ລ.ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ນັນທະລັດ ທິລາກຸນ	ປະທານ (ສະມາຊິກອິດສະຫຼະ)
2	ທ່ານ ພຸດທະເສນ ພົມມີໄຊ	ຮອງປະທານ (ສະມາຊິກອິດສະຫຼະ)
3	ທ່ານ ແພງ ດວງເງິນ	ສະມາຊິກ

2) ຄະນະກຳມະການຄຸ້ມຄອງຄວາມສ່ຽງ

ລ.ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ນັນທະລັດ ທິລາກຸນ	ປະທານ (ສະມາຊິກອິດສະຫຼະ)
2	ທ່ານ ພຸດທະເສນ ພົມມີໄຊ	ຮອງປະທານ (ສະມາຊິກອິດສະຫຼະ)
3	ທ່ານ ແພງ ດວງເງິນ	ສະມາຊິກ

3) ຄະນະກຳມະການກຳນົດຄ່າຕອບແທນ

ລ.ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ພຸດທະເສນ ພົມມີໄຊ	ປະທານ (ສະມາຊິກອິດສະຫຼະ)
2	ທ່ານ ປອ ສີທອງ ພົມມະຈິດ	ຮອງປະທານ
3	ທ່ານ ແພງ ດວງເງິນ	ສະມາຊິກ

1.5. ຂໍ້ມູນຄະນະອຳນວຍການ

ລ.ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ແພງ ດວງເງິນ	ຜູ້ອຳນວຍການໃຫຍ່

1.6. ຂໍ້ມູນຜູ້ຮັບຜິດຊອບວຽກງານ CG

ລ.ດ	ຊື່ ແລະ ນາມສະກຸນ	ເບີໂທ	ອີເມລ
1	ທ່ານ ຄອນສະຫວັນ ທຳວິງສິດ	020 2221 3854	mriks250765@gmail.com

2. ພາບລວມຄະແນນຜົນການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ

2.1. ຜົນການປະເມີນຄະແນນຕົວຈິງ

ຜົນປະເມີນຄະແນນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ ຂອງ ບໍລິສັດ ພກພ ປະຈຳປີ 2024 ແມ່ນເຫັນວ່າ: ບໍລິສັດ ພກພ ໄດ້ຄະແນນທັງໝົດ 42.11 ຄະແນນ ຈັດເປັນ ປະເພດ 2 ດາວ ຊຶ່ງມີລາຍລະອຽດເພີ່ມເຕີມດັ່ງນີ້:

ພາກ	ຄະແນນທັງໝົດ	ຄະແນນຕົວຈິງ
ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ	10	5.33
ການຄຸ້ມຄອງສາຍພົວພັນກັບຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ	10	2.73
ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ	40	21.08
ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ	40	12.97

ລວມ	**100**	**42.11**


1. ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ ປະຕິບັດໄດ້ 5.33 ຄະແນນ;
2. ການຄຸ້ມຄອງສາຍພົວພັນກັບຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ ປະຕິບັດໄດ້ 2.73 ຄະແນນ;
3. ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ ປະຕິບັດໄດ້ 21.08 ຄະແນນ;
4. ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ ປະຕິບັດໄດ້ 12.97 ຄະແນນ.

2.2. ຜົນການປະເມີນແຍກຕາມໝວດການໃຫ້ຄະແນນ

ການໃຫ້ຄະແນນປະກອບມີ 3 ປະເພດເຊັ່ນ: FA (Fully Applied) - ປະຕິບັດໄດ້ທັງໝົດ = 1 ຄະແນນ, PA (Partial Applied) - ປະຕິບັດໄດ້ບາງສ່ວນ = 0.5 ຄະແນນ ແລະ NA (Not Applied) - ບໍ່ສາມາດປະຕິບັດໄດ້ = 0 ຄະແນນ, ບໍລິສັດ ພາພ ສາມາດປະຕິບັດໄດ້ດັ່ງນີ້:

ພາພ	**ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ**		**ການຄຸ້ມຄອງສາຍພົວພັນກັບຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ**		**ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ**		**ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ**		**ລວມ**	
	ຄຳຖາມ	**%**	**ຄຳຖາມ**	**%**	**ຄຳຖາມ**	**%**	**ຄຳຖາມ**	**%**	**ຄຳຖາມ**	**%**
ປະຕິບັດໄດ້ທັງໝົດ	7.0	47%	2.0	18%	17.0	46%	8.0	22%	34.0	34%
ປະຕິບັດໄດ້ບາງສ່ວນ	2.0	13%	2.0	18%	5.0	14%	8.0	22%	17.0	17%
ບໍ່ສາມາດປະຕິບັດໄດ້	6.0	40%	7.0	64%	15.0	41%	21.0	57%	49.0	49%
ລວມ	**15.0**	**100%**	**11.0**	**100%**	**37.0**	**100%**	**37.0**	**100%**	**100.0**	**100%**

ຈາກຂໍ້ມູນຂ້າງເທິງນີ້ ແມ່ນເຫັນໄດ້ວ່າ ບໍລິສັດ ພາພ ສາມາດຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານໄດ້ທັງໝົດ ເທົ່າກັບ 34%, ຮອງລົງມາແມ່ນສາມາດປະຕິບັດໄດ້ບາງສ່ວນ 17% ແລະ ບໍ່ສາມາດປະຕິບັດໄດ້ 49% ຂອງ ຄຳຖາມທັງ ໝົດ. ຜົນການປະເມີນຂ້າງເທິງ ສາມາດສະທ້ອນຜ່ານເສັ້ນສະແດງ ດັ່ງນີ້:



3. ຂໍ້ປະຕິບັດສອດຄ່ອງ ແລະ ຂໍ້ຄົງຄ້າງ

3.1. ພາກທີ 1 ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ

ບໍລິສັດ ພກພ ສາມາດປະຕິບັດໄດ້ທັງໝົດ (FA) 47%, ຮອງລົງມາແມ່ນປະຕິບັດໄດ້ບາງສ່ວນ ເທົ່າກັບ (PA) 13% ແລະ ບໍ່ສາມາດປະຕິບັດໄດ້ແມ່ນ (NA) 40% ຂອງຄຳຖາມທັງໝົດໃນພາກນີ້ ຊຶ່ງມີລາຍລະອຽດ ດັ່ງນີ້:

ຂໍ້ປະຕິບັດສອດຄ່ອງ	ຂໍ້ຄົງຄ້າງ
- ການຈັດກອງປະຊຸມຜູ້ຖືຮຸ້ນ: ບໍລິສັດ ພກພ ໄດ້ສົ່ງໜັງສືແຈ້ງເຊີນໃຫ້ແກ່ຜູ້ຖືຮຸ້ນຢ່າງໜ້ອຍ 21 ວັນ ພ້ອມທັງຄັດຕິດເອກະສານສຳຄັນກ່ອນກອງປະຊຸມຜູ້ຖືຮຸ້ນ ພ້ອມນັ້ນ, ກໍໄດ້ແຈ້ງຂັ້ນຕອນ ວິທີການລົງຄະແນນສຽງ ແລະ ຜົນຂອງການລົງຄະແນນໃນແຕ່ລະວາລະ ລວມເຖິງການໃຫ້ສິດແກ່ຜູ້ຖືຮຸ້ນໃນການລົງຄະແນນສຽງ 1 ຮຸ້ນຕໍ່ 1 ສຽງໃນກອງປະຊຸມຜູ້ຖືຮຸ້ນ. - ບໍລິສັດ ພກພ ໄດ້ແຕ່ງຕັ້ງ ຫຼື ຍົກເລີກສັນຍາບໍລິສັດກວດສອບ ແລະ ຄ່າບໍລິການກວດສອບໄດ້ຮັບອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນ. - ຜູ້ຖືຮຸ້ນໄດ້ຮັບຂໍ້ມູນກ່ຽວກັບປະສົບການ ແລະ ປະຫວັດຫຍໍ້ຂອງເປົ້າໝາຍຜູ້ສະໝັກທີ່ຖືກສະເໜີລາຍຊື່ ເພື່ອປະກອບເປັນສະມາຊິກສະພາບໍລິຫານ ລວມທັງຂໍ້ມູນກ່ຽວກັບອາຍຸ, ວຸດທິການສຶກສາ, ປະສົບການ ແລະ ການດຳລົງຕຳແໜ່ງຂອງພວກເຂົາໃນບໍລິສັດຈົດທະບຽນ ກ່ອນກອງປະຊຸມຜູ້ຖືຮຸ້ນ. - ຜູ້ອຳນວຍການໃຫຍ່ ແລະ ຜູ້ກວດສອບພາຍນອກ ໄດ້ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ເປັນປະຈຳເພື່ອຕອບຄຳຖາມ ແລະ ຊີ້ແຈງປະເດັນທີ່ກ່ຽວຂ້ອງ.	- ບໍລິສັດ ພກພ ຍັງບໍ່ກຳນົດນະໂຍບາຍສິດຂອງຜູ້ຖືຮຸ້ນທີ່ຖືຮຸ້ນ ຫຼື ຖືລວມກັນ 5% ຂຶ້ນໄປຂອງຈຳນວນທັງໝົດຂອງບໍລິສັດ ມີສິດໃນການເພີ່ມວາລະກອງປະຊຸມຜູ້ຖືຮຸ້ນ ແລະ ຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນໜ້ອຍກວ່າ 5% ຂອງຈຳນວນທັງໝົດຂອງບໍລິສັດ ມີສິດໃນການສະເໜີເພີ່ມວາລະກອງປະຊຸມຜູ້ຖືຮຸ້ນຕໍ່ບໍລິສັດ ເພື່ອພິຈາລະນາ ໄວ້ໃນກົດລະບຽບພາຍໃນຂອງບໍລິສັດ. - ບໍລິສັດ ພກພ ຍັງບໍ່ກຳນົດນະໂຍບາຍສິດຂອງຜູ້ຖືຮຸ້ນທີ່ຖືຮຸ້ນ ຫຼື ຖືລວມກັນ 10% ຂຶ້ນໄປຂອງຈຳນວນທັງໝົດຂອງບໍລິສັດ ມີສິດສະເໜີສະພາບໍລິຫານ ຫຼື ຜູ້ອຳນວຍການບໍລິສັດ ເພື່ອຂໍເປີດກອງປະຊຸມຜູ້ຖືຮຸ້ນ ໄວ້ໃນກົດລະບຽບພາຍໃນຂອງບໍລິສັດ. - ບໍລິສັດ ພກພ ຍັງບໍ່ໄດ້ກຳນົດເຫດການກ່ຽວກັບການລົງທຶນ, ການຊື້-ຂາຍ ຫຼື ໂອນຊັບສິນທີ່ມີມູນຄ່າແຕ່ 50% ຂຶ້ນໄປຂອງຊັບສິນທັງໝົດ ແລະ ການອອກຈຳໜ່າຍຮຸ້ນໃໝ່ ແລະ ເຫດການອື່ນໆທີ່ສຳຄັນ ຊຶ່ງຕ້ອງໄດ້ຮັບການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ ໄວ້ໃນກົດລະບຽບພາຍໃນຂອງບໍລິສັດ. - ບໍລິສັດ ພກພ ຍັງບໍ່ໄດ້ກຳນົດກ່ຽວກັບນະໂຍບາຍປັນຜົນ ໂດຍສະເພາະຕິດພັນກັບວິທີການຈ່າຍເງິນປັນຜົນພາຍໃນ 30 ວັນ ພາຍຫຼັງມີມະຕິກອງປະຊຸມຜູ້ຖືຮຸ້ນ.

3.2. ພາກທີ 2 ການຄຸ້ມຄອງສາຍພົວພັນກັບຜູ້ມີສ່ວນຮ່ວມໃນຕະຫຼາດ

ບໍລິສັດ ພກພ ສາມາດປະຕິບັດໄດ້ທັງໝົດ (FA) 18% ຮອງລົງມາແມ່ນປະຕິບັດໄດ້ບາງສ່ວນ ເທົ່າກັບ (PA) 18% ແລະ ບໍ່ສາມາດປະຕິບັດໄດ້ແມ່ນ (NA) 64% ຂອງຄຳຖາມທັງໝົດໃນພາກນີ້ ຊຶ່ງມີລາຍລະອຽດ ດັ່ງນີ້:

ຂໍ້ປະຕິບັດສອດຄ່ອງ	ຂໍ້ຄົງຄ້າງ
- ສະພາບໍລິຫານ ໄດ້ສ້າງ ແລະ ກຳນົດນະໂຍບາຍດ້ານຄວາມປອດໄພ ແລະ ສະຫວັດດີການສັງຄົມ, ການຝຶກອົບຮົມ ແລະ ພັດທະນາບຸກຄະລາກອນ ເພື່ອໃຫ້ພະນັກງານຂອງບໍລິສັດປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຈັດຕັ້ງປະຕິບັດວຽກງານໃຫ້ບັນລຸຜົນສຳເລັດຕາມເປົ້າໝາຍຂອງບໍລິສັດ ແລະ ມີສ່ວນຮ່ວມໃນວຽກງານຄຸ້ມຄອງບໍລິຫານບໍລິສັດ.	- ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ມີສ່ວນຮ່ວມໃນຕະຫຼາດຂອງຕົນ. - ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງເຈົ້າໜີ້ ເປັນຕົ້ນແມ່ນ ການກຳນົດເງື່ອນໄຂການຄ້ຳປະກັນ ແລະ ການຜິດນັດຊຳລະໜີ້ ໄວ້ໃນນິຕິກຳຂອງບໍລິສັດ. - ສະພາບໍລິຫານ ບໍ່ໄດ້ລະບຸຊ່ອງທາງການຕິດຕໍ່ພົວພັນເພື່ອຮັບຄຳເຫັນ ຫຼື ຄຳຮ້ອງຮຽນຂອງຜູ້ມີສ່ວນຮ່ວມໃນຕະຫຼາດຂອງຕົນ ກ່ຽວກັບບັນຫາ, ຂໍ້ສົງໄສ ຫຼື ການລະເມີດສິດ/ສັນຍາຂອງພວກເຂົາໄວ້ໃນເວັບໄຊ ຫຼື ປົດສະຫຼຸບການເຄື່ອນໄຫວທຸລະກິດປະຈຳປີຂອງບໍລິສັດ. - ສະພາບໍລິຫານ ຍັງບໍ່ໄດ້ສ້າງນະໂຍບາຍ ຫຼື ກົນໄກເພື່ອປົກປ້ອງພະນັກງານ ຫຼື ຜູ້ມີສ່ວນຮ່ວມໃນຕະຫຼາດຂອງຕົນ ທີ່ສະໜອງຂໍ້ມູນ, ຄຳເຫັນ ຫຼື ຄຳຮ້ອງຮຽນກ່ຽວກັບພຶດຕິກຳທີ່ບໍ່ສອດຄ່ອງກັບຫຼັກຈັນຍາບັນຂອງບໍລິສັດ. - ບໍລິສັດ ພກພ ຍັງບໍ່ໄດ້ສ້າງກົນໄກ ສຳລັບການສະໜອງຂໍ້ມູນ, ຄຳເຫັນ ຫຼື ຄຳຮ້ອງຮຽນຂອງພະນັກງານຕໍ່ກັບພຶດຕິກຳທີ່ບໍ່ສອດຄ່ອງກັບຫຼັກຈັນຍາບັນ, ລະບຽບການ ຫຼື ກົດໝາຍ ຂອງສະມາຊິກສະພາບໍລິຫານ ຫຼື ຜູ້ບໍລິຫານລະດັບສູງຂອງບໍລິສັດ. - ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍກ່ຽວກັບການພົວພັນກັບຊຸມຊົນທ້ອງຖິ່ນທີ່ບໍລິສັດດຳເນີນງານຢູ່, ນະໂຍບາຍກ່ຽວກັບການຄັດເລືອກຄູ່ຄ້າ, ຜູ້ສະໜອງ ແລະ ຜູ້ຮັບເໝົາ,ນະໂຍບາຍສິ່ງແວດລ້ອມ ແລະ ການສົ່ງເສີມການພັດທະນາແບບຍືນຍົງ, ນະໂຍບາຍການຕ້ານການສໍ້ໂກງ ແລະ ການຮັບ ຫຼື ໃຫ້ສິນບົນ ຢ່າງເຂັ້ມງວດ.

3.3. ພາກທີ 3 ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ

ບໍລິສັດ ພກພ ສາມາດປະຕິບັດໄດ້ທັງໝົດ (FA) 46% ຮອງລົງມາແມ່ນປະຕິບັດໄດ້ບາງສ່ວນ ເທົ່າກັບ (PA) 14% ແລະ ບໍ່ສາມາດປະຕິບັດໄດ້ແມ່ນ (NA) 40% ຂອງຄຳຖາມທັງໝົດໃນພາກນີ້ ຊຶ່ງມີລາຍລະອຽດ ດັ່ງນີ້:

ຂໍ້ປະຕິບັດສອດຄ່ອງ	ຂໍ້ຄົງຄ້າງ
- ບໍລິສັດ ພກພ ໄດ້ເປີດເຜີຍຂໍ້ມູນກ່ຽວກັບລາຍການທີ່ກ່ຽວພັນ, ລັກສະນະ, ມູນຄ່າ ແລະ ລາຍຊື່ ບຸກຄົນ ແລະ ນິຕິບຸກຄົນ ທີ່ກ່ຽວພັນ ພ້ອມທັງສາຍພົວພັນຂອງຜູ້ກ່ຽວຕໍ່ລາຍການທີ່ກ່ຽວພັນໃນເອກະສານລາຍງານການເງິນ. - ບໍລິສັດ ພກພ ໄດ້ເປີດເຜີຍກ່ຽວກັບ ວິໄສທັດ, ຈຸດປະສົງ, ເປົ້າໝາຍ ຫຼື ແຜນຍຸດທະສາດໃນການເຄື່ອນໄຫວວຽກງານ ຂອງບໍລິສັດ. - ບໍລິສັດ ພກພ ໄດ້ເປີດເຜີຍຂໍ້ມູນກ່ຽວກັບ ລາຍຊື່ຜູ້ຖືຮຸ້ນ ທາງກົງ ແລະ ທາງອ້ອມ ທີ່ຖືຮຸ້ນແຕ່ 5% ຂຶ້ນໄປ. - ບໍລິສັດ ພກພ ໄດ້ເປີດເຜີຍຂໍ້ມູນກ່ຽວກັບການຖືຮຸ້ນ ທາງກົງ ແລະ ທາງອ້ອມຂອງສະມາຊິກສະພາບໍລິຫານ. - ບໍລິສັດ ພກພ ໄດ້ເປີດຄ່າບໍລິການຂອງບໍລິສັດກວດສອບ ທີ່ໄດ້ຮັບຈາກການກວດສອບເອກະສານລາຍງານການເງິນ. - ບໍລິສັດ ພກພ ໄດ້ເປີດເຜີຍບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບຈາກຜູ້ກວດສອບພາຍນອກ ພາຍໃນ 120 ວັນ ນັບແຕ່ວັນສິ້ນສຸດປີການບັນຊີ. - ບໍລິສັດ ພກພ ໄດ້ເປີດເຜີຍເອກະສານລາຍງານການເງິນປະຈຳໄຕມາດ 1 ແລະ 3 ພາຍໃນ 45 ວັນ ນັບແຕ່ວັນສິ້ນສຸດໄຕມາດ 1 ເປັນຕົ້ນໄປ. - ບໍລິສັດ ພກພ ໄດ້ເປີດເຜີຍເອກະສານລາຍງານການເງິນປະຈຳ 6 ເດືອນຕົ້ນປີ ທີ່ຜ່ານການທົບທວນຈາກຜູ້ກວດສອບພາຍນອກ ພາຍໃນ 60 ວັນ ນັບແຕ່ວັນສິ້ນສຸດໄຕມາດ 2 ເປັນຕົ້ນໄປ. - ບໍລິສັດ ພກພ ໄດ້ເປີດເຜີຍມະຕິກອງປະຊຸມຜູ້ຖືຮຸ້ນ ພາຍໃນກຳນົດເວລາ 24 ຊົ່ວໂມງ ນັບແຕ່ວັນສຳເລັດກອງປະຊຸມຜູ້ຖືຮຸ້ນເປັນຕົ້ນໄປ. - ບໍລິສັດ ພກພ ໄດ້ມີການແຕ່ງຕັ້ງຜູ້ຮັບຜິດຊອບໃນການລາຍງານ ແລະ ຜູ້ຮັບຜິດຊອບວຽກງານເປີດເຜີຍຂໍ້ມູນ ແລະ ໄດ້ຜ່ານການຝຶກອົບຮົມວຽກງານດັ່ງກ່າວ.	- ບໍລິສັດ ພກພ ບໍ່ໄດ້ເປີດເຜີຍນະໂຍບາຍກ່ຽວກັບລາຍການທີ່ກ່ຽວພັນ ເປັນຕົ້ນ ຂັ້ນຕອນການພິຈາລະນາ ແລະ ການອະນຸມັດ ລາຍການທີ່ກ່ຽວພັນ (RPTs) ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ. - ບໍລິສັດ ພກພ ບໍ່ໄດ້ເປີດເຜີຍຂໍ້ມູນລະອຽດກ່ຽວກັບ ກຸ່ມບໍລິສັດ ຫຼື ບໍລິສັດໃນກຸ່ມ ຂອງຕົນ, ຂໍ້ມູນທາງການເງິນ, ປັດໄຈຄວາມສ່ຽງ, ນະໂຍບາຍປັນຜົນ, ຂໍ້ມູນລະອຽດກ່ຽວກັບ ຈຳນວນຄັ້ງໃນການຈັດກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມຄະນະກຳມະການຂອງສະພາບໍລິຫານ, ເຫດການສຳຄັນທີ່ເກີດຂຶ້ນພາຍໃນປີ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງບໍລິສັດ. - ບໍລິສັດ ພກພ ໄດ້ເປີດເຜີຍຂໍ້ມູນກ່ຽວກັບການຖືຮຸ້ນ ທາງກົງ ແລະ ທາງອ້ອມຂອງຄະນະຜູ້ອຳນວຍການ. - ບໍລິສັດ ພກພ ບໍ່ໄດ້ເປີດຄ່າບໍລິການອື່ນໆຂອງບໍລິສັດກວດສອບພາຍນອກ ທີ່ບໍ່ແມ່ນການກວດສອບເອກະສານລາຍງານການເງິນ. - ບໍລິສັດ ພກພ ບໍ່ໄດ້ລາຍງານ ຫຼື ເປີດເຜີຍຂໍ້ມູນການຊື້ຂາຍຮຸ້ນບໍລິສັດ ຂອງສະມາຊິກສະພາບໍລິຫານ ຫຼື ຄະນະອຳນວຍການ, ຫົວໜ້າກວດກາພາຍໃນ, ຫົວໜ້າບັນຊີ ແລະ ຫົວໜ້າການເງິນ ພາຍໃນ 72 ຊົ່ວໂມງ. - ບໍລິສັດ ພກພ ບໍ່ໄດ້ເປີດເຜີຍຂໍ້ມູນກ່ຽວກັບ ເອກະສານລາຍງານການເງິນ, ບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ, ມະຕິກອງປະຊຸມຜູ້ຖືຮຸ້ນ ແລະ ບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ໃນເວັບໄຊ້ຂອງບໍລິສັດ ຢ່າງປົກກະຕິ. - ບໍລິສັດ ພກພ ບໍ່ໄດ້ສ້າງ ແລະ ເປີດເຜີຍຂໍ້ມູນກ່ຽວກັບມາດຖານທີ່ນຳໃຊ້ໃນການຄັດເລືອກ, ຂັ້ນຕອນການຄັດເລືອກ ແລະ ແຕ່ງຕັ້ງສະພາບໍລິຫານຊຸດໃໝ່. - ບໍລິສັດ ພກພ ບໍ່ໄດ້ສ້າງ ແລະ ເປີດເຜີຍລະບຽບພາຍໃນກ່ຽວກັບການກຳນົດຄ່າຕອບແທນຂອງສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານ ໃຫ້ມວນຊົນຊາບຜ່ານທາງເວັບໄຊຂອງບໍລິສັດ. - ບໍລິສັດ ພກພ ຍັງບໍ່ໄດ້ເປີດເຜີຍ ນະໂຍບາຍຄ່າຕອບແທນ ແລະ ມູນຄ່າລວມທັງໝົດ ຂອງສະມາຊິກສະພາບໍລິຫານ, ຄະນະອຳນວຍໃນແຕ່ລະປີ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງບໍລິສັດ. - ບໍລິສັດ ພກພ ບໍ່ໄດ້ເປີດເຜີຍຂໍ້ມູນກ່ຽວກັບພະນັກງານຮັບຜິດຊອບຕິດຕໍ່ພົວພັນກັບຜູ້ຖືຮຸ້ນ ແລະ ນັກລົງທຶນ (ນັກລົງທຶນສຳພັນ).

	- ບໍລິສັດ ພກພ ບໍ່ໄດ້ມີການສັບປ່ຽນ ບໍລິສັດກວດສອບ ທຸກໆ 5 ປີ.

3.4. ພາກທີ 4 ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ

ບໍລິສັດ ພກພ ສາມາດປະຕິບັດໄດ້ທັງໝົດ (FA) 21%, ປະຕິບັດໄດ້ບາງສ່ວນ (PA) 22% ແລະ ບໍ່ສາມາດ ປະຕິບັດໄດ້ (NA) 57% ຂອງຄຳຖາມທັງໝົດໃນພາກນີ້ ຊຶ່ງມີລາຍລະອຽດ ດັ່ງນີ້:

ຂໍ້ປະຕິບັດສອດຄ່ອງ	ຂໍ້ຄົງຄ້າງ
- ບໍລິສັດ ພກພ ມີສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ຢ່າງໜ້ອຍ 1 ທ່ານ ມີປະສົບການເຮັດວຽກໃນຂະແໜງການທີ່ກ່ຽວຂ້ອງກັບການດຳເນີນທຸລະກິດ. - ສະພາບໍລິຫານມີສະມາຊິກເພດຍິງ 1 ທ່ານ. - ການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ສະມາຊິກສະພາບໍລິຫານໄດ້ຮັບການຕົກລົງເຫັນດີຈາກກອງປະຊຸມຜູ້ຖືຮຸ້ນ. - ສະພາບໍລິຫານ ປະກອບມີສະມາຊິກທັງໝົດ 05 ທ່ານ ແລະ ໃນນີ້ສະມາຊິກອິດສະຫຼະມີ 02 ທ່ານ. - ສະມາຊິກສະພາບໍລິຫານ ແຕ່ລະທ່ານໄດ້ເຂົ້າຮ່ວມກອງປະຊຸມສະພາບໍລິຫານຢ່າງໜ້ອຍ 3/4 ຂອງກອງປະຊຸມທັງໝົດ. - ສະພາບໍລິຫານ ໄດ້ກຳນົດ ຈຸດປະສົງ, ວິໄສທັດ ແລະ ສື່ສານວັດທະນາທຳຂອງອົງກອນ ເພື່ອເຮັດໃຫ້ພະນັກງານທັງໝົດພາຍໃນບໍລິສັດ ເຂົ້າໃຈກ່ຽວກັບທິດທາງແຜນຍຸດທະສາດຂອງບໍລິສັດ. - ປະທານຄະນະກຳມະການກວດສອບ ມີຄວາມຮູ້ ຫຼື ປະສົບການດ້ານບັນຊີ. - ປະທານຄະນະກຳມະການກວດສອບ, ຄະນະກຳມະການຄຸ້ມຄອງຄວາມສ່ຽງ, ຄະນະກຳມະການກຳນົດຄ່າຕອບແທນ ແມ່ນສະມາຊິກອິດສະຫຼະ. - ສະພາບໍລິຫານໄດ້ມີການແຕ່ງຕັ້ງ ຄະນະກຳມະການກວດສອບ, ຄະນະກຳມະການຄຸ້ມຄອງຄວາມສ່ຽງ ແລະ ຄະນະກຳມະການກຳນົດຜົນຕອບແທນ. - ສະມາຊິກສະພາບໍລິຫານແຕ່ລະຄົນ ໄດ້ຮັບເອກະສານທີ່ຕິດພັນກັບກອງປະຊຸມສະພາບໍລິຫານ ຫຼື ຄະນະກຳມະການຂອງສະພາບໍລິຫານ ຢ່າງໜ້ອຍ 7 ວັນລັດຖະການ ກ່ອນການປະຊຸມ.	- ປະທານສະພາບໍລິຫານບໍ່ແມ່ນສະມາຊິກອິດສະຫຼະ ພ້ອມນັ້ນສະພາບໍລິຫານ ຍັງບໍ່ໄດ້ຄັດເລືອກ ແລະ ແຕ່ງຕັ້ງຫົວໜ້າສະມາຊິກອິດສະຫຼະ. - ບໍລິສັດ ພກພ ຍັງບໍ່ໄດ້ກຳນົດເງື່ອນໄຂ, ມາດຕະຖານການເປັນສະມາຊິກສະພາບໍລິຫານ, ສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ແລະ ສະມາຊິກອິດສະລະ, ຕ້ອງມີຈຳນວນສະມາຊິກເພດຍິງ ຢ່າງໜ້ອຍ 1 ທ່ານ, ອາຍຸການດຳລົງຕຳແໜ່ງ ຫຼື ພົ້ນຕຳແໜ່ງການເປັນສະມາຊິກສະພາບໍລິຫານ, ຂັ້ນຕອນ ແລະ ວິທີການເຮັດວຽກ ລວມໄປເຖິງນະໂຍບາຍກຳນົດຄ່າແທນຕ່າງໆຂອງສະມາຊິກສະພາບໍລິຫານ ແລະ ອື່ນໆ ໄວ້ໃນລະບຽບພາຍໃນບໍລິສັດ ຕາມຄຳແນະນຳວ່າດ້ວຍການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນ. - ສະພາບໍລິຫານຍັງບໍ່ໄດ້ມີການຈັດກອງປະຊຸມຢ່າງໜ້ອຍ 4 ຄັ້ງຕໍ່ປີ. - ຄະນະກຳມະການຄຸ້ມຄອງຄວາມສ່ຽງ ແລະ ຄະນະກຳມະການກຳນົດຄ່າຕອບແທນ ຍັງບໍ່ໄດ້ມີຈັດກອງປະຊຸມກັນຢ່າງໜ້ອຍ 2 ຄັ້ງຕໍ່ປີ. - ຄະນະກຳມະການກວດສອບ ບໍ່ໄດ້ມີຈັດກອງປະຊຸມກັນຢ່າງໜ້ອຍ 4 ຄັ້ງຕໍ່ປີ. - ກົດລະບຽບກ່ຽວກັບສະພາບໍລິຫານ ຍັງບໍ່ໄດ້ຖືກເຜີຍແຜ່ຜ່ານເວັບໄຊ້ຂອງບໍລິສັດ. - ສະພາບໍລິຫານ ຍັງບໍ່ ໄດ້ແຕ່ງຕັ້ງຄະນະກຳມະການຄັດເລືອກ. - ຄະນະກຳມະການຄຸ້ມຄອງຄວາມສ່ຽງ ຍັງບໍ່ໄດ້ສ້າງ ແລະ ຄຸ້ມຄອງຂັ້ນຕອນ ແລະ ນະໂຍບາຍໃນການກຳນົດ ແລະ ບໍລິຫານຄວາມສ່ຽງ. - ສະພາບໍລິຫານ ຍັງບໍ່ໄດ້ຮັບຮອງລະບຽບພາຍໃນກ່ຽວກັບຄະນະກຳມະການຕ່າງໆຂອງສະພາບໍລິຫານ ພ້ອມທັງເຜີຍແຜ່ລະບຽບດັ່ງກ່າວໃຫ້ມວນຊົນຮັບຊາບຜ່ານເວັບໄຊ ຂອງບໍລິສັດ.

	- ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ເປີດເຜີຍແຜນສືບທອດພະນັກງານສຳລັບຕຳແໜ່ງສະມາຊິກສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານທີ່ສຳຄັນຂອງບໍລິສັດ. - ສະພາບໍລິຫານ ຍັງບໍ່ໄດ້ຮັບຮອງແຜນການຈັດກອງປະຊຸມສະພາບໍລິຫານທີ່ ກວມເອົາວັນເວລາຈັດຕັ້ງກອງປະຊຸມສະພາບໍລິຫານ ແລະ ວາລະ ຈະປຶກສາຫາລື. - ສະພາບໍລິຫານ ຍັງບໍ່ໄດ້ປະເມີນຜົນການເຄື່ອນໄຫວວຽກງານຂອງສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານປະຈຳປີ. - ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ເປີດເຜີຍມາດຖານ, ເງື່ອນໄຂ ແລະ ຂັ້ນຕອນກ່ຽວກັບການປະເມີນຜົນການເຄື່ອນໄຫວວຽກງານຂອງ ປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ. - ສະພາບໍລິຫານ ຍັງບໍ່ໄດ້ກຳນົດອົງປະຊຸມຂອງກອງປະຊຸມສະພາບໍລິຫານ ຢ່າງໜ້ອຍ 2/3 ຂອງຈຳນວນສະມາຊິກທັງໝົດ ໄວ້ໃນລະບຽບພາຍໃນຂອງສະພາບໍລິຫານ.

4. ສິ່ງທີ່ຕ້ອງໄດ້ປັບປຸງ

4.1. ສິ່ງທີ່ຄວນກຳນົດໃນລະບຽບພາຍໃນ ຫຼື ລະບຽບການສະເພາະຂອງບໍລິສັດ

ເພື່ອປັບປຸງວຽກງານການຄຸ້ມຄອງບໍລິຫານໃຫ້ດີຂຶ້ນ, ພກພ ຄວນແກ້ໄຂບັນຫາທີ່ຄົງຄ້າງ ດັ່ງນີ້:

- ຄວນກຳນົດນະໂຍບາຍສິດຂອງຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນ 5% ຂຶ້ນໄປຂອງຈຳນວນທັງໝົດຂອງບໍລິສັດ ມີສິດໃນການເພີ່ມວາລະກອງປະຊຸມຜູ້ຖືຮຸ້ນ ແລະ ຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນໜ້ອຍກວ່າ 5% ຂອງຈຳນວນທັງໝົດຂອງບໍລິສັດ ຄວນໄດ້ຮັບສິດໃນການສະເໜີເພີ່ມວາລະກອງປະຊຸມຜູ້ຖືຮຸ້ນຕໍ່ບໍລິສັດ ເພື່ອພິຈາລະນາ ໄວ້ໃນກົດລະບຽບພາຍໃນຂອງບໍລິສັດ;
- ຄວນກຳນົດນະໂຍບາຍສິດຂອງຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນ 10% ຂຶ້ນໄປຂອງຈຳນວນທັງໝົດຂອງບໍລິສັດ ມີສິດສະເໜີສະພາບໍລິຫານ ຫຼື ຜູ້ອຳນວຍການບໍລິສັດ ເພື່ອຂໍເປີດກອງປະຊຸມຜູ້ຖືຮຸ້ນ ໄວ້ໃນກົດລະບຽບພາຍໃນຂອງບໍລິສັດ;
- ຄວນກຳນົດເຫດການກ່ຽວກັບການລົງທຶນ, ການຊື້-ຂາຍ ຫຼື ໂອນຊັບສິນທີ່ມີມູນຄ່າແຕ່ 50% ຂຶ້ນໄປຂອງຊັບສິນທັງໝົດ, ການອອກຈຳໜ່າຍຮຸ້ນອອກໃໝ່ ແລະ ເຫດການອື່ນໆທີ່ສຳຄັນ ທີ່ຕ້ອງໄດ້ຮັບການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ ໄວ້ໃນລະບຽບພາຍໃນຂອງບໍລິສັດ;
- ສະພາບໍລິຫານຄວນສ້າງ ແລະ ຮັບຮອງນະໂຍບາຍເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ມີສ່ວນຮ່ວມໃນຕະຫຼາດ, ນະໂຍບາຍກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງເຈົ້າໜີ້ ເປັນຕົ້ນແມ່ນ ການກຳນົດເງື່ອນໄຂການຄ້ຳປະກັນ ແລະ ການຜິດນັດຊຳລະໜີ້;
- ສະພາບໍລິຫານຄວນສ້າງ ແລະ ຮັບຮອງນະໂຍບາຍກ່ຽວກັບການພົວພັນຊຸມຊົນທ້ອງຖິ່ນທີ່ບໍລິສັດດຳເນີນການຢູ່ ນະໂຍບາຍກ່ຽວກັບການຄັດເລືອກຄູ່ຄ້າ, ຜູ້ສະໜອງ ແລະ ຜູ້ຮັບເໝົາ, ນະໂຍບາຍສິ່ງແວດລ້ອມ ແລະ ການສົ່ງເສີມການພັດທະນາແບບຍືນຍົງ;

- ສະພາບໍລິຫານຄວນສ້າງ ແລະ ຮັບຮອງນະໂຍບາຍການຕ້ານການສໍ້ໂກງ ແລະ ການຮັບ ຫຼື ໃຫ້ສິນບົນ ຢ່າງເຂັ້ມງວດ;
- ສະພາບໍລິຫານ ຄວນກຳນົດເງື່ອນໄຂ, ມາດຕະຖານຂອງການເປັນສະມາຊິກສະພາບໍລິຫານ, ໂຄງປະກອບບຸກຄະກອນສະພາບໍລິຫານຕ້ອງປະກອບສະມາຊິກອິດສະຫຼະ, ສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ແລະ ສະມາຊິກສະພາບໍລິຫານເພດຍິງ, ສີດ, ໜ້າທີ່, ຄວາມຮັບຜິດຊອບ, ອາຍຸການດຳລົງຕຳແໜ່ງ ຫຼື ພົ້ນຕຳແໜ່ງການເປັນສະມາຊິກສະພາບໍລິຫານ, ຂັ້ນຕອນ ແລະ ແຜນວິທີການເຮັດວຽກ, ນະໂຍບາຍກຳນົດຄ່າຕອບແທນຂອງສະມາຊິກສະພາບໍລິຫານ ແລະ ອື່ນໆ ຕາມຫຼັກການຄຸ້ມຄອງບໍລິຫານ ທີ່ກຳນົດໄວ້ໃນຄຳແນະນຳວ່າດ້ວຍການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນ.
- ສະພາບໍລິຫານຄວນສ້າງ ແລະ ກຳນົດນະໂຍບາຍ ຫຼື ກົນໄກ ເພື່ອປົກປ້ອງພະນັກງານ ຫຼື ຜູ້ມີສ່ວນຮ່ວມໃນຕະຫຼາດຂອງຕົນ ທີ່ສະໜອງຂໍ້ມູນ, ຄຳເຫັນ ຫຼື ຄຳຮ້ອງຮຽນ ກ່ຽວກັບຜິດຕິກຳທີ່ບໍ່ສອດຄ່ອງກັບຫຼັກຈັນຍາບັນຂອງບໍລິສັດ.
- ຄະນະກຳມະການຄຸ້ມຄອງຄວາມສ່ຽງຄວນສ້າງ ແລະ ຄຸ້ມຄອງຂັ້ນຕອນນະໂຍບາຍໃນການກຳນົດ ແລະ ບໍລິຫານຄວາມສ່ຽງ.

4.2. ສິ່ງທີ່ຄວນນຳໄປຈັດຕັ້ງປະຕິບັດໃນຕໍ່ໜ້າ

ເພື່ອປັບປຸງວຽກງານການຄຸ້ມຄອງບໍລິຫານໃຫ້ດີຂຶ້ນ ພກພ ຄວນເອົາໃຈໃສ່ຈັດຕັ້ງປະຕິບັດເພີ່ມເຕີມ ດັ່ງນີ້:

- ຄວນເປີດເຜີຍຂໍ້ມູນກ່ຽວກັບນະໂຍບາຍກ່ຽວກັບລາຍການທີ່ກ່ຽວພັນ, ນະໂຍບາຍເງິນປັນຜົນ, ນະໂຍບາຍການກຳນົດຄ່າຕອບແທນ ແລະ ມູນຄ່າລວມທັງໝົດຂອງ ສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ, ປັດໄຈຄວາມສ່ຽງ, ເຫດການສຳຄັນທີ່ເກີດຂຶ້ນ, ຂໍ້ມູນກຸ່ມບໍລິສັດ ຫຼື ບໍລິສັດໃນກຸ່ມຂອງຕົນ (ຖ້າມີ ຫຼື ບໍ່ມີກໍຕາມ) ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ;
- ສະພາບໍລິຫານສ້າງ ແລະ ເປີດເຜີຍມາດຖານທີ່ນຳໃຊ້ໃນການຄັດເລືອກ, ຂັ້ນຕອນ, ເງື່ອນໄຂ ແລະ ການແຕ່ງຕັ້ງສະພາບໍລິຫານ ຊຸດໃໝ່;
- ຄວນລາຍງານ ຫຼື ເປີດເຜີຍຂໍ້ມູນການຊື້ ຂາຍຮຸ້ນບໍລິສັດ ຂອງສະມາຊິກສະພາບໍລິຫານ ຫຼື ຄະນະອຳນວຍການ, ຫົວໜ້າກວດກາພາຍໃນ, ຫົວໜ້າບັນຊີ ແລະ ຫົວໜ້າການເງິນ ພາຍໃນ 72 ຊົ່ວໂມງ;
- ຄວນເປີດເຜີຍຄ່າບໍລິການອື່ນຂອງບໍລິສັດກວດສອບພາຍນອກ ທີ່ບໍ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນ (ຖ້າມີ ຫຼື ບໍ່ມີກໍ່ຕາມ);
- ຄວນເປີດເຜີຍບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ ແລະ 6 ເດືອນຕົ້ນປີ ແລະ ເອກະສານລາຍງານການເງິນ, ມະຕິກອງປະຊຸມຜູ້ຖືຮຸ້ນ ແລະ ບົດບັນທຶກກອງປະຊຸມຜູ້ຖືຮຸ້ນໃນເວັບໄຊຂອງບໍລິສັດຢ່າງເປັນປົກກະຕິ;
- ຄວນເປີດເຜີຍການຖືຮຸ້ນທາງກົງ ແລະ ທາງອ້ອມຂອງຄະນະອຳນວຍການ;
- ປະທານສະມາຊິກສະພາບໍລິຫານ ຄວນແມ່ນສະມາຊິກອິດສະຫຼະ. ກໍລະນີປະທານສະພາບໍລິຫານບໍ່ແມ່ນສະມາຊິກອິດສະຫຼະ ສະພາບໍລິຫານຄວນຄັດເລືອກ ແລະ ແຕ່ງຕັ້ງຫົວໜ້າສະມາຊິກອິດສະຫຼະເພື່ອດຳເນີນການແທນ;
- ສະພາບໍລິຫານຄວນສ້າງ ແລະ ເປີດເຜີຍແຜນສືບທອດພະນັກງານ ສຳລັບຕຳແໜ່ງສະມາຊິກສະພາບໍລິຫານ ຄະນະອຳນວຍການ ແລະ ພະນັກງານທີ່ສຳຄັນຂອງບໍລິສັດ;
- ສະພາບໍລິຫານຄວນຮັບຮອງເອົາແຜນຈັດກອງປະຊຸມຂອງສະພາບໍລິຫານ ແລະ ຄະນະກຳມະການຕ່າງໆ ກວມເອົາວັນຈັດກອງປະຊຸມ ແລະ ວາລະທີ່ຈະນຳມາປຶກສາຫາຫລື;

- ຄະນະກຳມະການຕ່າງໆ ຄວນຈັດກອງປະຊຸມສອດຄ່ອງຕາມລະບຽບການທີ່ກ່ຽວຂ້ອງ ແລະ ເຂົ້າຮ່ວມກອງປະຊຸມດັ່ງກ່າວເປັນປົກກະຕິ;
- ສະພາບໍລິຫານຄວນແຕ່ງຕັ້ງຄະນະກຳມະການຄັດເລືອກ;
- ຄວນເຜີຍແຜ່ກິດລະບຽບຂອງສະພາບໍລິຫານໃນເວັບໄຊຂອງບໍລິສັດ;
- ສະພາບໍລິຫານຄວນປະເມີນຜົນການເຄື່ອນໄຫວວຽກງານຂອງສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານປະຈຳປີ;
- ສະພາບໍລິຫານຄວນສ້າງ ແລະ ເຜີຍແຜ່ມາດຖານ, ເງື່ອນໄຂ ແລະ ຂັ້ນຕອນກ່ຽວກັບການປະເມີນຜົນການເຄື່ອນໄຫວວຽກງານຂອງ ປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ.

ຜູ້ອຳນວຍການໃຫຍ່ ຕລຊລ

ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ Lao Securities Exchange Co.,Ltd

ສຸພັກ ຖິ່ນໄຊພອນ